ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສາລະວັນ

ເລກທີ 626 /ຈຂ.ສວ
ສາລະວັນ, ວັນທີ 8.7.2024

# ຂໍ້ຕົກລົງ

ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກຳມະການຫັນເປັນດິຈິຕອນ
ປະຈຳແຂວງສາລະວັນ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ 4, ມາດຕາ 20, ຂໍ້ທີ 13.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ສະບັບເລກທີ 19/ນຍ ລົງວັນທີ 30 ມັງກອນ 2023.
- ອີງຕາມ ຄຳແນະນຳຈັດຕັ້ງປະຕິບັດດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການລະດັບຊາດ ເພື່ອຫັນເປັນດິຈິຕອນ ຂອງ ສປປ ລາວ ສະບັບເລທີ 002/ຄຊດລ, ລົງວັນທີ 04 ມັງກອນ 2024.
- ອີງຕາມ ໜັງສືສະເໜີຂອງພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ສະບັບເລກທີ............/ພຕສ, ລົງວັນທີ ..............................;

## ເຈົ້າແຂວງສາລະວັນ ຕົກລົງ:

ມາດຕາ 1 ແຕ່ງຕັ້ງຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກຳມະການຫັນເປັນດິຈິຕອນ ປະຈຳແຂວງສາລະວັນ ປະກອບດ້ວຍບັນດາທ່ານ ດັ່ງນີ້:

1. ທ່ານ ຮອງເຈົ້າແຂວງສາລະວັນ, ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ເປັນປະທານ;
2. ທ່ານ ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ເປັນຮອງປະທານ ແລະ ເປັນຜູ້ປະຈຳການ;
3. ທ່ານ ຮອງ ຫົວໜ້າ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເປັນກຳມະການ;
4. ທ່ານ ຮອງ ຫົວໜ້າ ກອງບັນຊາການທະຫານແຂວງ ເປັນກຳມະການ;
5. ທ່ານ ຮອງ ຫົວໜ້າ ຫ້ອງວ່າການແຂວງ ເປັນກຳມະການ;
6. ທ່ານ ຮອງ ຫົວໜ້າ ຄະນະໂຄສະນາອົບຮົມ ແຂວງ ເປັນກຳມະການ;
7. ທ່ານ ຮອງ ຫົວໜ້າ ພະແນກແຜນການ ແລະ ການລົງທຶນ ແຂວງ ເປັນກຳມະການ;
8. ທ່ານ ຮອງ ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ເປັນກຳມະການ;
9. ທ່ານ ຮອງ ຫົວໜ້າ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນກຳມະການ;
10. ທ່ານ ຮອງ ຫົວໜ້າ ພະແນກສຶກສາທິການ ແລະ ກິລາ ແຂວງ ເປັນກຳມະການ;
11. ທ່ານ ຮອງ ຫົວໜ້າ ພະແນກແຮງງານ ແລະ ສະຫວັດດີການ-ສັງຄົມ ແຂວງ ເປັນກຳມະການ;
12. ທ່ານ ຮອງ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ເປັນກຳມະການ;
13. ທ່ານ ຮອງ ຫົວໜ້າ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ເປັນກຳມະການ;

Scanned with CamScanner
CamScanner

14. ທ່ານ ຮອງ ຫົວໜ້າ ພະແນກ ພາຍໃນ ແຂວງ ເປັນກຳມະການ;
15. ທ່ານ ຮອງ ຫົວໜ້າ ພະແນກ ສາທາລະນະສຸກ ແຂວງ ເປັນກຳມະການ;
16. ທ່ານ ຮອງ ຫົວໜ້າ ພະແນກ ການເງິນ ແຂວງ ເປັນກຳມະການ;
17. ທ່ານ ຮອງ ຫົວໜ້າ ພະແນກ ພົວພັນການຕ່າງປະເທດ ແຂວງ ເປັນກຳມະການ;
18. ທ່ານ ຮອງ ຫົວໜ້າ ພະແນກ ພະລັງງານ ແລະ ບໍ່ແຮ່ ແຂວງ ເປັນກຳມະການ;
19. ທ່ານ ຮອງ ຫົວໜ້າ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ເປັນກຳມະການ;
20. ທ່ານ ຮອງ ຫົວໜ້າ ພະແນກ ຍຸຕິທຳ ແຂວງ ເປັນກຳມະການ;
21. ທ່ານ ຮອງ ຫົວໜ້າ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ຫົວໜ້າຄະນະຊ່ວຍວຽກ, ເປັນກຳມະການ;
22. ທ່ານ ຜູ້ອຳນວຍການບໍລິສັດລາວໂທລະຄົມມະນາຄົມ ສາຂາແຂວງສາລະວັນ ເປັນກຳມະການ;
23. ທ່ານ ຜູ້ອຳນວຍການບໍລິສັດ ອີທີແອລ ຈຳກັດ ສາຂາແຂວງສາລະວັນ ເປັນກຳມະການ;
24. ທ່ານ ຜູ້ອຳນວຍການບໍລິສັດ ສະຕາໂທລະຄົມ ສາຂາແຂວງສາລະວັນ ເປັນກຳມະການ;
25. ທ່ານ ຮອງເຈົ້າເມືອງ 08 ຕົວເມືອງ ຜູ້ຊີ້ນຳວຽກງານເສດຖະກິດ ເປັນກຳມະການ;

ມາດຕາ 2 ພາລະບົດບາດ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກຳມະການຫັນເປັນດິຈິຕອນ ປະຈຳແຂວງສາລະວັນ.

- ຄະນະກຳມະການຄຸ້ມຄອງອິນເຕີເນັດ ປະຈຳແຂວງສາລະວັນ ຂຽນຕົວຫຍໍ້ວ່າ: "ຄຄອວ" ເປັນເສນາທິການຊ່ວຍອົງການປົກຄອງແຂວງ ໃນການຄົ້ນຄວ້າ, ຊີ້ນຳ ແລະ ປະສານງານກັບບັນດາພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ ແລະເມືອງ ກ່ຽວກັບການຄົ້ນຄວ້າ, ປະສານງານ, ຕິດຕາມ, ຄຸ້ມຄອງ, ກວດກາ, ຕອບຕ້ານ ແລະ ຊຸກຍູ້ສົ່ງເສີມວຽກງານອິນເຕີເນັດ, ເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ, ເຕັກໂນໂລຊີດິຈິຕອນ, ການຫັນເປັນດິຈິຕອນ, ເນື້ອໃນຂໍ້ມູນຂ່າວສານຜ່ານອິນເຕີເນັດ, ຄວາມປອດໄພດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (ຕໍ່ໄປນີ້ ຈະເອີ້ນວ່າ "ວຽກງານອິນເຕີເນັດ") ໃຫ້ມີຄວາມຮັບປະກັນຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ;
- ຄະນະກຳມະການຫັນເປັນດິຈິຕອນ ປະຈຳແຂວງສາລະວັນ ຂຽນຫຍໍ້ວ່າ "ຄຫດຂ" ເປັນເສນາທິການຊ່ວຍອົງການປົກຄອງແຂວງ ໃນການວາງແນວທາງ, ຍຸດທະສາດ, ກຳນົດນະໂຍບາຍ, ແຜນການ ແລະ ກົນໄກໃນການຊີ້ນຳ ຈັດຕັ້ງປະຕິບັດການຫັນເປັນດິຈິຕອນຢູ່ທ້ອງຖິ່ນ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຫັນເປັນ ລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ ໃນ ສປປ ລາວ.
- ໃຫ້ຄະນະດັ່ງກ່າວ ແບ່ງວຽກ-ແບ່ງຄວາມຮັບຜິດຊອບ ພາຍໃນຄະນະໃຫ້ລະອຽດຈະແຈ້ງ.

ມາດຕາ 3 ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກຳມະການຫັນເປັນດິຈິຕອນ ປະຈຳແຂວງສາລະວັນ ມີດັ່ງນີ້:

1. ປະຕິບັດນິຕິກຳ ຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງອິນເຕີເນັດ ວາງອອກຢ່າງເຂັ້ມງວດ;
2. ຊ່ວຍອົງການປົກຄອງແຂວງ ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ຮ່າງນະໂຍບາຍ, ວາງກົນໄກ, ແຜນຍຸດທະສາດ, ນິຕິກຳແຜນດຳເນີນງານ ແລະ ແຜນພັດທະນາວຽກງານອິນເຕີເນັດ, ພື້ນຖານໂຄງລ່າງຂໍ້ມູນຂ່າວສານ, ລະບົບສາຍສົ່ງໂທລະຄົມມະນາຄົມ, ລະບຽບການເຄື່ອນໄຫວ ແລະ ມາດຕະການແກ້ໄຂຕ່າງໆ ຕາມການມອບໝາຍ ເພື່ອສະເໜີຕໍ່ອົງການປົກຄອງແຂວງ ພິຈາລະນາອະນຸມັດ; ຄົ້ນຄວ້າຫັນເອົານະໂຍບາຍ, ຍຸດທະສາດ, ແຜນງານ ແລະ ມະຕິຕົກລົງ ຂອງລັດຖະບານ ກ່ຽວກັບວຽກງານອິນເຕີເນັດ ມາເປັນແຜນຍຸດທະສາດ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;

Scanned with CamScanner

CamScanner

3. ຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດແນວທາງ, ຍຸດທະສາດ, ກົນໄກ ແລະ ນະໂຍບາຍຊຸກຍູ້ສົ່ງເສີມການຫັນເປັນດີຈິຕອນ ຂອງ ແຂວງສາລະວັນ, ບົນພື້ນຖານການພັດທະນາລັດຖະບານດີຈິຕອນ, ເສດຖະກິດດີຈິຕອນ, ສັງຄົມດີຈິຕອນ, ປະກອບຄຳເຫັນຕໍ່ການຈັດຕັ້ງປະຕິບັດຍຸດທະສາດ, ແຜນງານ, ກົນໄກ, ນະໂຍບາຍ, ບັນດາໂຄງການກ່ຽວກັບການຫັນເປັນດີຈິຕອນ, ສ້າງເງື່ອນໄຂສະດວກໃຫ້ແກ່ການຫັນເປັນດີຈິຕອນ ຂອງ ແຂວງສາລະວັນ.

4. ຊີ້ນຳ ແລະ ອອກຄຳແນະນຳ ບັນດາພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ເມືອງ, ອົງການຈັດຕັ້ງລັດ ແລະ ເອກະຊົນ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຍຸດທະສາດ, ນະໂຍບາຍ, ແຜນງານ, ກົນໄກ, ບັນດາໂຄງການຫັນເປັນດີຈິຕອນ, ໂດຍຕິດພັນການພັດທະນາຊັບພະຍາກອນມະນຸດທີ່ມີຄຸນນະພາບສູງ ແລະ ສ້າງພະນັກງານ-ລັດຖະກອນ ທີ່ມີທັກສະດີຈິຕອນ; ວຽກງານອິນເຕີເນັດ ເພື່ອກຳນົດມາດຕະຖານ, ເງື່ອນໄຂ, ການບໍລິການ ແລະ ວຽກງານ ອື່ນໆ ທີ່ກ່ຽວຂ້ອງກັບລະບົບອິນເຕີເນັດ ໃຫ້ເປັນຮູບປະທຳ ແລະ ມີປະສິດຕິພາບ;

5. . ຕິດຕາມ, ກວດກາ, ຊຸກຍູ້ ແລະ ກຳນົດບູລະມະສິດ ແຜນງານ ແລະ ໂຄງການ ການຈັດຕັ້ງປະຕິບັດວຽກງານການຫັນເປັນດີຈິຕອນ, ບັນດາເນື້ອໃນທີ່ກ່ຽວຂ້ອງກັບ ວິໄສທັດການພັດທະນາເສດຖະກິດດີຈິຕອນ ແຫ່ງຊາດ ໄລຍະ 20 ປີ ( 2021-2040), ຍຸດທະສາດການພັດທະນາເສດຖະກິດດີຈິຕອນ ແຫ່ງຊາດ ໄລຍະ 10 ປີ ( 2021-2030) ແລະ ແຜນພັດທະນາເສດຖະກິດດີຈິຕອນ ແຫ່ງຊາດ ໄລຍະ 5 ປີ ( 2021-2025);

6. ຊີ້ນຳວຽກງານຕອບຕ້ານ ແລະ ກ່າວຟ້ອງຂຶ້ນສານ ໃນກໍລະນີມີການແຊກແຊງຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເຕີເນັດ ເພື່ອຫວັງທຳລາຍມ້າງເພລະບົບການເມືອງ, ເສດຖະກິດ, ວັດທະນະທຳ ແລະ ສັງຄົມ ຊຶ່ງເຫັນວ່າແຕະຕ້ອງເຖິງຄວາມໝັ້ນຄົງ ຂອງ ສປປ ລາວ;

7. ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງ ຫຼື ປັບປຸງກົນໄກ, ນະໂຍບາຍ ຫຼື ຈັດຕັ້ງປະຕິບັດນິຕິກຳທີ່ກ່ຽວຂ້ອງ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ຂອງແຂວງ;

8. ພົວພັນ, ປຶກສາຫາລືກັບຕ່າງປະເທດ, ບັນດາແຂວງ, ອົງການຈັດຕັ້ງອື່ນໆ ລວມທັງບັນດາຂະແໜງການຂັ້ນສູນກາງ ແລະ ເມືອງ ເພື່ອແລກປ່ຽນບົດຮຽນ ແລະ ຍາດແຍ່ງເອົາການຊ່ວຍເຫຼືອ ເຂົ້າໃນການພັດທະນາວຽກງານອິນເຕີເນັດ ແລະ ວຽກງານການຫັນເປັນດີຈິຕອນ ລວມທັງວຽກງານຕອບຕ້ານ ໃນກໍລະນີ ມີການແຊກແຊງຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເຕີເນັດ;

9. ຄຸ້ມຄອງ, ກວດກາ, ຕິດຕາມ, ສະຫຼຸບລາຍງານ ແລະ ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດບັນດານິຕິກຳ, ແຜນງານ ແນໃສ່ສົ່ງເສີມ ແລະ ພັດທະນາວຽກງານອິນເຕີເນັດ, ວຽກງານການຫັນເປັນດີຈິຕອນ ເພື່ອສະເໜີອົງການປົກຄອງແຂວງ ພິຈາລະນາຮັບຮອງ ແລະ ລາຍງານອົງການຈັດຕັ້ງທີ່ກ່ຽວຂ້ອງ ຕາມລະບຽບການ;

10. ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມກ່ຽວກັບວຽກງານອິນເຕີເນັດ ແລະ ວຽກງານການຫັນເປັນດີຈິຕອນ ຕາມການອະນຸມັດ;

11. ສະຫຼຸບລາຍງານ ກ່ຽວກັບການເຄື່ອນໄຫວວຽກງານໃຫ້ ອົງການປົກຄອງແຂວງເປັນແຕ່ລະໄລຍະ;

12. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງ ອົງການປົກຄອງແຂວງ;

ມາດຕາ 4 ສິດ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກຳມະການຫັນເປັນດີຈິຕອນ ປະຈຳແຂວງສາລະວັນ ມີດັ່ງນີ້:

1. ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການກ່ຽວກັບວຽກງານອິນເຕີເນັດ ລວມທັງວຽກງານຕອບຕ້ານ ໃນກໍລະນີ ມີການແຊກແຊງຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເຕີເນັດ;

Scanned with CamScanner
CamScanner

2. ສະເໜີປັບປຸງ, ແກ້ໄຂ, ສ້າງ ຫຼື ຍົກເລີກ ບັນດານະໂຍບາຍ, ກົນໄກ, ແຜນຍຸດທະສາດ, ນິຕິກຳ, ລະບຽບການເຄື່ອນໄຫວ ແລະ ມາດຕະການຕ່າງໆ ກ່ຽວກັບວຽກງານການຫັນເປັນດິຈິຕອນ;
3. ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບັນດາແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດ ທີ່ກ່ຽວພັນເຖິງການພັດທະນາວຽກງານອິນເຕີເນັດ ແລະ ວຽກງານການຫັນເປັນດິຈິຕອນ;
4. ຄົ້ນຄວ້າ ແລະ ຊອກຫາແຫຼ່ງງົບປະມານພັດທະນາວຽກງານອິນເຕີເນັດ ໃຫ້ມີປະສິດຕິພາບ ແລະ ປະສິດທິຜົນ;
5. ຈັດກອງປະຊຸມສະໄໝສາມັນ ທຸກໆ 6 ເດືອນ ແລະ ກອງປະຊຸມວິສາມັນຕາມຄວາມຮຽກຮ້ອງຕ້ອງການ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກຳມະການຫັນເປັນດິຈິຕອນ ປະຈຳແຂວງສາລະວັນ ເພື່ອສະຫຼຸບວາງແຜນ ກຳນົດທິດທາງໜ້າທີ່ເປັນຈຸດສຸມຂອງການພັດທະນາວຽກງານອິນເຕີເນັດ ແລະ ວຽກງານການຫັນເປັນດິຈິຕອນ ໃນແຕ່ລະໄລຍະ;
6. ແຕ່ງຕັ້ງອະນຸກຳມະການວິຊາການຊ່ວຍວຽກສະເພາະດ້ານເມື່ອເຫັນວ່າມີຄວາມຈຳເປັນ ພ້ອມທັງກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສັດ ແລະ ຄວາມເຮັບຜິດຊອບຂອງອະນຸກຳມະການໃຫ້ຈະແຈ້ງຮັດກຸມ;
7. ສະເໜີປັບປຸງໂຄງປະກອບກົງຈັກການຈັດຕັ້ງ ແລະ ກອງເລຂາຊ່ວຍວຽກ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກຳມະການຫັນເປັນດິຈິຕອນ ປະຈຳແຂວງສາລະວັນ;
8. ພົວພັນປະສານງານ, ຮ່ວມມືແລກປ່ຽນບົດຮຽນດ້ານວຽກງານອິນເຕີເນັດ ແລະ ດ້ານວຽກງານການຫັນເປັນດິຈິຕອນ. ລວມທັງວຽກງານຕອບຕ້ານ ທີ່ມີການແຊກແຊງຈາກພາຍນອກ ແລະ ພາຍໃນຜ່ານລະບົບອິນເຕີເນັດກັບບັນດາພະແນການ; ອົງການທຽບເທົ່າ, ເມືອງ ແລະ ອົງການຈັດຕັ້ງຕ່າງໆ ຕາມຄວາມເໝາະສົມ;
9. ຄົ້ນຄວ້າບັນດາເປົ້າໝາຍນຳໃຊ້ຂໍ້ມູນຂ່າວສານ ຜ່ານລະບົບອິນເຕີເນັດ ຫຼື ສັງຄົມອອນລາຍຕ່າງໆ ທີ່ລະເມີດຕໍ່ກົດໝາຍ, ລະບຽບການ, ແນວທາງນະໂຍບາຍຂອງພັກ ເພື່ອຊີ້ນຳ ຫຼື ນຳສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ຕອບໂຕ້, ຕອບຕ້ານ ແລະ ແກ້ໄຂຕາມຄວາມເໝາະສົມ;
10. ສະເໜີຍ້ອງຍໍ ແລະ ປະຕິບັດນະໂຍບາຍ ທີ່ເໝາະສົມຕໍ່ການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຜົນງານ ຕອບຕ້ານປະກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ພັດທະນາວຽກງານອິນເຕີເນັດ ແລະ ວຽກງານການຫັນເປັນດິຈິຕອນ ລວມທັງວຽກງານ ທີ່ມີການແຊກແຊງຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເຕີເນັດ;
11. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງລັດຖະບານ

ມາດຕາ 5 ແຕ່ງຕັ້ງກອງເລຂາຊ່ວຍວຽກຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກຳມະການຫັນເປັນດິຈິຕອນ ປະຈຳແຂວງສາລະວັນ ປະກອບດ້ວຍບັນດາທ່ານ ດັ່ງນີ້:

1. ທ່ານ ຮອງຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ຜູ້ຊີ້ນຳວຽກງານດິຈິຕອນ ແລະ ຄວາມປອດໄພໄຊເບີ — ເປັນຫົວໜ້າ.
2. ຫົວໜ້າຂະແໜງ ດິຈິຕອນ ແລະ ຄວາມປອດໄພໄຊເບີ, ພະແນກ ຕສ ແຂວງ — ເປັນຮອງ;
3. ຫົວໜ້າຂະແໜງ ໄປສະນີ ແລະ ການສື່ສານ, ພະແນກ ຕສ ແຂວງ — ເປັນຄະນະ;
4. ຫົວໜ້າຂະແໜງ ເຕັກໂນໂລຊີ ແລະ ນະວັດຕະກຳ, ພະແນກ ຕສ ແຂວງ — ເປັນຄະນະ;
5. ຫົວໜ້າຂະແໜງ ຖະແຫຼງຂ່າວ-ສື່ມວນຊົນ, ພະແນກ ຖວທ — ເປັນຄະນະ;
6. ຮອງຫົວໜ້າ ຂະແໜງດິຈິຕອນ ແລະ ຄວາມປອດໄພໄຊເບີ, ພະແນກ ຕສ ແຂວງ — ເປັນຄະນະ;
7. ຫົວໜ້າພາກສ່ວນເຕັກນິກ ທີ່ບໍລິການໂທລະຄົມມະນາຄົມ ສາຂາແຂວງ — ເປັນຄະນະ;

Scanned with CamScanner
CamScanner

**ມາດຕາ 6** ໜ້າທີ່ ແລະ ຂອບເຂດສິດກອງເລຂາຊ່ວຍວຽກຂອງຄະນະກໍາມະການຄຸ້ມຄອງອິນເຕີເນັດ ປະຈໍາແຂວງ ສາລະວັນ ມີດັ່ງນີ້:

1. ເປັນເສນາທິການຊ່ວຍຄະນະກໍາມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກໍາມະການຫັນເປັນດີຈີຕອນ ປະຈໍາແຂວງສາລະວັນ ໃນການຄົ້ນຄວ້າ ແລະ ປະສານງານກັບບັນດາພະແນກການອ້ອມຂ້າງແຂວງ, ເມືອງ, ອົງການຈັດຕັ້ງຕ່າງໆ ກ່ຽວກັບວຽກງານອິນເຕີເນັດ ແລະ ວຽກງານການຫັນເປັນດີຈີຕອນ; ຈັດຕັ້ງກົງຈັກບຸກຄະລາກອນກອງເລຂາ ໃຫ້ແທດເໝາະກັບພາລະບົດບາດ ແລະ ໜ້າທີ່ ທີ່ໄດ້ຮັບມອບຫມາຍ;
2. ຂຶ້ນແຜນວຽກ, ແຜນງົບປະມານ, ສະຫຼຸບລາຍງານຕໍ່ຄະນະກໍາມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກໍາມະການຫັນເປັນດີຈີຕອນ ປະຈໍາແຂວງສາລະວັນ ຕໍ່ຜົນການຈັດຕັ້ງປະຕິບັດ ແລະ ຖອດຖອນບົດຮຽນໃນແຕ່ລະໄລຍະ;
3. ຕິດຕາມ, ກວດກາຜູ້ໃຫ້ບໍລິການອິນເຕີເນັດ, ອິນເຕີເນັດຂ້າມແດນ, ຮ້ານອິນເຕີເນັດຄາເຟ, ການພະນັນອອນລາຍ ແລະ ປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນພາຍໃນແຂວງ ກ່ຽວກັບວຽກງານອິນເຕີເນັດ, ພ້ອມທັງໃຫ້ການຮ່ວມມືກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການຕິດຕາມ ຊອກຄົ້ນຜູ້ເຜີຍແຜ່ຂໍ້ມູນຂ່າວສານ ທີ່ເປັນການລະເມີດຕໍ່ລະບຽບກົດໝາຍ;
4. ຜັນຂະຫຍາຍບັນດາວຽກງານຕ່າງໆ ທີ່ເປັນອັນລວມ ໃຫ້ເປັນລະອຽດ ແລະ ອັນສະເພາະ ຕິດພັນກັບການຫັນເປັນທັນສະໄໝຂອງຄະນະກໍາມະການ ຫັນເປັນດີຈີຕອນ ແລະ ຄະນະຊ່ວຍວຽກຄະນະກໍາມະການ ຫັນເປັນດີຈີຕອນ ປະຈໍາແຂວງສາລະວັນ;
5. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະກໍາມະການຄຸ້ມຄອງອິນເຕີເນັດ ແລະ ຄະນະກໍາມະການ ຫັນເປັນດີຈີຕອນ ປະຈໍາແຂວງສາລະວັນ;

**ມາດຕາ 7** ມອບໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງສາລະວັນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງປະຕິບັດໃຫ້ໄດ້ຮັບຜົນສໍາເລັດເປັນຢ່າງດີ.

- ໃຫ້ບັນດາພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ ແຕ່ງຕັ້ງລາຍຊື່ຜູ້ຮັບຜິດຊອບຂອງຂະ ແໜງການຕົນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາທີ 1 ເພື່ອປະກອບເຂົ້າໃນຄະນະດັ່ງກ່າວ ແລ້ວແຈ້ງລາຍຊື່ໃຫ້ກອງເລຂາ ຄຄອຂ ແລະ ຄຫດຂ (ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງສາລະວັນ) ເພື່ອສັງລວມ ແລະ ຮັບຊາບ.
- ບັນດາພະແນກການ,ອົງການທຽບເທົ່າອ້ອມຂ້າງແຂວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມດ້ວຍບັນດາທ່ານ ທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 8** ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 605/ຈຂ.ສວ, ລົງວັນທີ 01 / 08 / 2023 ແລະ ມີຜົນສັກສິດນໍາໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮຊ ເຈົ້າແຂວງສາລະວັນ

ສົມໃຈ ອຸ່ນຈິດ

<u>ບ່ອນນໍາສົ່ງ:</u>
- ພະແນກ ຕສ ແຂວງ 01 ສະບັບ (ເພື່ອຮັບຊາບ)
- ພະແນກການກ່ຽວຂ້ອງ 01 ສະບັບ (ເພື່ອຮັບຊາບ)
- ຂາເຂົ້າ-ຂາອອກ ຫ້ອງວ່າການແຂວງ 01 ສະບັບ (ສໍາເນົາເກັບມ້ຽນ)

Scanned with CamScanner
CamScanner